# ໂປຣແກຣມ ອໍຣະມະນີ ສໍາລັບໃຊ້ຂຽນຫນັງສືລາວ ຢູນີກົດ ປັສຈາກລິຂສິດໃດໆ

## ຄວາມຫມາຍ

ສິ່ງສໍາຄັນສໍາລັບແຜງ ອໍຣະມະນີ ແມ່ນການຈັດເອົາຕົວອັກສອນທີ່ມີສຽງຄ້າຍຄືກັນເຂົ້າມາເປັນຄູ່ກັນ ຄື ພຍັນຊນະເປັນຄູ່ກັບພຍັນຊນະ ແລະສຣະກໍເປັນຄູ່ກັບສຣະ ແລ້ວຈິ່ງຈັດຄູ່ຕ່າງໆເຫລົ່ານັ້ນ ເຂົ້າໄປຕິດຕັ້ງໃສ່ໃນລູກດານແຕ່ລະລູກ

ແງ່ດີຂອງແຜງແບບນີ້ມີ ຄື ຫລຸດຄວາມຫຍຸ້ງຍາກໃນການຊອກຫາຕົວອັກສອນລາວແຕ່ລະຕົວ ຕາມລູກດີດຕ່າງໆນຶ່ງ ແລະ ເພື່ອກໍານົດຈໍານວນອັກສອນທີ່ຈະເອົາໄປຕິດຕັ້ງໃສ່ຢູ່ຕາມລູກດີດຕ່າງໆໃຫ້ນ້ອຍລົງນຶ່ງ ດ້ວຍເຫດດັ່ງກ່າວນີ້ການຈື່ຈໍາຕົວອັກສອນຕາມລູກດີດຕ່າງໆກໍງ່າຍຂຶ້ນ ພ້ອມທັງຈະອໍານວຍຄວາມສະດວກໃຫ້ແກ່ ເດັກນ້ອຍ ແລະ ຜູ້ເຖົ້າ[໑]

## ຄໍາອະທິບາຍ

ການກົດເລກອັກສອນລາວໃສ່ ຢູນີກົດ[Unicode] ກໍເປັນການດີ ເພາະວ່າ ຫນັງສືລາວແຕ່ລະຕົວຈະໄດ້ມີເລກປະຈໍາຕົວໂດຍສິ້ນເຊີງ ແຕ່ວ່າ ການກົດເລກອັກສອນລາວເຂົ້າໃສ່ກົດ ອັງຊີ[ANSI] ຈະເປັນພຽງແຕ່ການຢືມເອົາເລກປະຈໍາຕົວຂອງຫນັງສືລາຕິນ[Latin]ມາໃຊ້ ອັນຈະພາໃຫ້ການແລກປ່ຽນເອກສານທີ່ຂຽນດ້ວຍອັກສອນກົດອັງຊີເປັນໄປໄດ້ຍາກ

ແຜງ ອໍຣະມະນີ ເປັນແຜງທີ່ບັນຈຸອັກສອນລາວອັນມີຈໍານວນນ້ອຍທີ່ສຸດ ແລະ ເປັນແຜງທີ່ສາມາດໃຊ້ຕີຫນັງສືລາວໄດ້ຢ່າງຄົບຖ້ວນ ຈະເປັນກົດຢຸນີຫລືກົດອັງຊີກໍດີ ຖ້າເຮົາອີງຕາມຈໍານວນອັກສອນທີ່ມີຢູ່ໃນກົດຢູນີ ແລະ ຈໍານວນອັກສອນທີ່ເຮົາໃຊ້ກັນຢູ່ເລື້ອຍໆ ເຮົາຄວນເອົາຈໍາພວກວັນນະຍຸດສີ່ຕົວນີ້ ຄື ໄມ້ເອກ ໄມ້ໂທ ໄມ້ຕຣີ ແລະ ໄມ້ຈັຕວາ ກັບໄມ້ກະຣັນ ເຂົ້າຢູ່ໃນຖ້ານຕໍ່າ ສ່ວນຈໍາພວກຖ້ານສູງຂໍໃຫ້ເປັນຕົວເສີມ ກົດດຽວກັນເທົ່ານີ້ກໍພຽງພໍກັບຄວາມຕ້ອງການ

ຜິວ່າ ນັກແຕ້ມຕົວຫນັງສືລາວທຸກຄົນໃຊ້ຫລັກອັນດຽວກັນ ພວກເຮົາຈະບໍ່ມີບັນຫາໃດໆໃນການແລກປ່ຽນເອກສານທີ່ຂຽນດ້ວຍແມ່ພິມລາວຢູນີກົດ[Unicode] ຕົວອັກສອນຕ່າງໆຈະຢູ່ຄືງທີ່ຕາມເອກສານເຄົ້າ ຖ້າເຮົາປ່ຽນແມ່ພິມ

## ຫລັກການ

ເພື່ອອໍານວຍຄວາມສະດວກໃຫ້ແກ່ຜູ້ໃຊ້ສອຍແຜງອໍຣະມະນີຕ່າງໆ ຂ້າພະເຈົ້າໄດ້ວາງຫລັກແນວນຶ່ງໄວ້ວ່າຢ່າງນີ້ ຄື

- ◌₭ : Alt+ກ — ໃຫ້ເນັ້ນສອງລູກພ້ອມໆກັນ (ສໍາລັບ ເງິນຕຣາລາວ)
- ◌฿ : Alt+ບ — ສໍາລັບ ເງິນຕຣາໄທຍ໌
- ໜ : Alt+ນ
- ໝ : Alt+ມ
- ຫຼ◌ : Alt+ຫ
- ◌ຼ : Alt+ລ
- ◌໊ : Alt+◌໊ — ສໍາລັບ ໄມ້ຕຣີຖ້ານສູງ
- ◌໋ : Alt+◌໋ — ສໍາລັບ ໄມ້ຈັຕວາຖ້ານສູງ
- ◌໌ : Alt+◌໌ — ສໍາລັບ ໄມ້ກະຣັນຖ້ານສູງ
- ◌‰ : Alt+% — ສໍາລັບ ນຶ່ງສ່ວນພັນ

ORAMANY 2005-2006-2007

**ແ◌ ໃຫ້ຕີ ເ◌ ສອງເທື່ອ**

◌ຸ : Alt+◌.◌

ອັກສອນເຫລົ່ານີ້ຄວນຢູ່ຖ້ານຕໍ່າ
◌່ U0EC8 --> (◌່ ຕໍ່າ)
◌້ U0EC9 --> (◌້ ຕໍ່າ)
◌໊ U0ECA --> (◌໊ ຕໍ່າ)
◌໋ U0ECB --> (◌໋ ຕໍ່າ)
◌໌ U0ECC --> (◌໌ ຕໍ່າ)

ສ່ວນອັກສອນຕົວອື່ນໆນັ້ນ ໃຫ້ທ່ານເບິ່ງຕາມແຜງທີ່ທ່ານໃຊ້ ເຖິງຢ່າງໃດກໍດີ ທ່ານສາມາດໃຊ້ແຜງ ອໍຣະມະນີຫລືໂປຣແກຣມ ອໍຣະມະນີ ຂຽນຫນັງສືລາວ ໂດຍໃຊ້ແມ່ພິມ[Font/e] ຢູນີກົດ[Unicode] ຊນິດໃດກໍໄດ້ ຕ່າງແຕ່ວ່າແຜງ ອໍຣະມະນີ ບໍ່ໃຊ້ສຣະ ແ◌ ແຕ່ໃຊ້ສຣະ ເ◌ ຊ້ອນກັນສອງອັນເພື່ອປະກອບໃຫ້ເປັນສຣະແອ ແຕ່ສ່ວນສຣະ ແ◌ ແທ້ໆນັ້ນກໍຄືກກົດເລກເຫມືອນກັນ

---

໑ ແຜງແມ່ພິມລາວ «La refonte d'un clavier lao», ນ້ອຍ ບາສີ, ໂດຍ ຄໍາແພວ ພູເພັຊຣ໌ລິນທອງ ເມື່ອວັນທີ ໑໐/໐໕/໒໐໐໗ ເດືອນ ພຶສພາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌

## ພົກເປຣແກຣມ

ພົກ ອໍຣະມະນີ ໒໐໐໕ ປະກອບດ້ວຍ (Oramany 2005.exe package) :

໑- ແມ່ພິມອັນມີຊື່ວ່າ ມະນີເດຊ [Manideth.ttf] ທີ່ຖືກກົດເລກເຂົ້າເປັນ ຢູນີກົດ[Unicode]

໒- ແຜງແມ່ພິມລາວ ຫລື ແປ້ນພິມ ທີ່ທ່ານສາມາດຂຽນ ຕາມການຈັດຂອງແຜງ ອໍຣະມະນີ

໓- ແຜງແມ່ພິມລາວ ຫລື ແປ້ນພິມ ທີ່ທ່ານສາມາດເປີດຂຶ້ນໃຊ້ບົນຈໍໄດ້ (Visual keyboard)

໔- ທ່ານສາມາດໃຊ້ແຜງອັນນີ້ຂຽນຫນັງສືລາວທີ່ໃຊ້ແມ່ພິມຢູນີກົດຊນິດໃດກໍໄດ້ເຫມືອນກັນ

## ວິທີການໃຊ້ ໂປຣແກຣມ ອໍຣະມະນີ ໒໐໐໕

ຫລັງຈາກການສາກ ໂປຣແກຣມ Oramany 2005.exe ລົງມາອັດປະໄວ້ໃນຄອມພິວເຕີຂອງທ່ານຣຽບຮ້ອຍແລ້ວ ກ່ອນທ່ານຈະຂຽນເປັນພາສາລາວໄດ້ ທ່ານຕ້ອງ:

໑- (ທະວິດີກ) ດີກໄວໆສອງເທື່ອໃສ່ Oramany 2005.exe ເພື່ອຕິດຕັ້ງມັນ (ທະວິ = ສອງ ດັ່ງ ທະວິຖູນ)

໒- ຫລັງຈາກຕິດຕັ້ງມັນຣຽບຮ້ອຍແລ້ວ ມອດຄອມພິວເຕີຂອງທ່ານ ແລ້ວຈິ່ງເປີດໃຫມ່ ໃນເມື່ອ ຄອມພິວເຕີ ຂອງທ່ານເປີດຣຽບຮ້ອຍແລ້ວ ເກີ(icône, icon)[໒] ຂອງ ໂປຣແກຣມ ອໍຣະມະນີ ອັນນ້ອຍໆອັນນຶ່ງ ຕ້ອງປະກົດຢູ່ເບື້ອງລຸ່ມກ້ຳຂວາຂອງຈໍ ( barre d'état,  status bar (ລຳສະພາບ ຫລື ລຳພາວະ(?)  ) ບາດແລ້ວຈິ່ງ

໓- ດີກໃສ່ເກີໂຕທີ່ມີ (K) ແລ້ວຈິ່ງຂຶ້ນໄປດີກໃສ່ Oramany 2005 (ຫລັງຈາກນີ້ ເກີຈະປ່ຽນສີມາເປັນສີຂຽວເຫລືອງ ໃນເມື່ອທ່ານເຫັນອັກສອນ «O» ຫລື «ອ» ປະກົດຂຶ້ນທັບເກີສີຂຽວເຫລືອແລ້ວ ທ່ານກໍສາມາດຂຽນພາສາລາວໄດ້ຢ່າງສະບາຍ)

ຫາກແຕ່ວ່າ ທ່ານຕ້ອງຮູ້ຈັກຕົວອັກສອນທີ່ທ່ານຕ້ອງການຕີມັນອອກມານັ້ນ ບັນທຶກຢູ່ບົນລູກດີດລູກໃດກັນແທ້ ສຳລັບເຣື່ອງນີ້ ທ່ານສາມາດເປີດແຜງບົນຈໍຂຶ້ນໄວ້ໃຊ້ໄດ້ (clavier visuel, Visual keyboard) ດັ່ງນີ້

໓- ດັກໃສ່ເກີ ອໍຣະມະນີ ໒໐໐໕ ເບື້ອງລຸ່ມກ້ຳຂວາ  (ເກີ = icône, icon)

໔- ດີກໃສ່ຫົວຫນູຂ້າງຂວາ ແລ້ວຈິ່ງໄປດີກໃສ່ Visual keyboard  ( [ສັກຂິແຜງ](?) )

໕- ດີກໃສ່ເກີຂອງໂປຣແກຣມ [K] ແລ້ວຈິ່ງຂຶ້ນໄປດີກໃສ່ Oramany 2005[ອໍຣະມະນີ ໒໐໐໕] ຫລັງຈາກນີ້ ທ່ານຈະເຫັນ ອັກສອນ «O» ຫລື «ອ» ປະກົດຂຶ້ນທັບເກີສີຂຽວເຫລືອງ (ແລະ ຖ້າຍັງບໍ່ທັນເປີດ ໃຫ້)

໓- ເປີດໂປຣແກຣມຣຽບຣຽງຫນັງສື(Traitement de texte, word processing) ຫລືໂປຣແກຣມຊນິດໃດຊນິດນຶ່ງທີ່ໃຊ້ຂຽນຫນັງສືລາວໄດ້ ແລ້ວທ່ານຈິ່ງຈະເຫັນອັກສອນລາວຕ່າງໆປະກົດອອກມາ ໃນແຜງບົນຈໍ ຄື Visual keyboard

ໂປຣແກຣມ Oramany 2005.exe ທີ່ເອົາແຜງແມ່ພິມລາວ ອໍຣະມະນີ ເປັນພື້ນຖານ ຈະນຳຄວາມສະດວກໃຫ້ແກ່ບັນດາທ່ານທີ່ມີອາຍຸສູງ ແລະ ບັນດາເດັກເລັກເດັກນ້ອຍທັງຫລາຍ ອີກປະການນຶ່ງ ຖ້າທ່ານບໍ່ມັກຕົວອັກສອນ ມະນີເດຊ ທ່ານສາມາດປ່ຽນຕົວອັກສອນໃຫມ່ຫລືປ່ຽນແມ່ພິມລາວ ຢູນີກົດ[Unicode] ຊນິດໃຫມ່ກໍໄດ້ ຫລັງຈາກທ່ານຕີຫນັງສືຂອງທ່ານຣຽບຮ້ອຍແລ້ວ ຍ້ອນວ່າ ແມ່ພິມຊນິດຢູນີກົດ[Unicode] ມີເລກປະຈຳຕົວແບບຕາຍຕົວເປັນຂອງຕົນເອງໂດຍບໍ່ໄດ້ອາໄສບ່ອນຢູ່ຂອງອັກສອນລາຕິນຕົວອື່ນໆ ຫມາຍຄວາມວ່າ ການແລກປ່ຽນຫນັງສືລາວ ກໍເປັນໄປໄດ້ດັ່ງຄາດຫມາຍ (ພຽງແຕ່ວ່າ ປ່ຽນແມ່ພິມລາວຢູນີກົດຊນິດໃຫມ່ ກໍພຽງພໍກັບຄວາມຕ້ອງການ)

ຖ້າທ່ານມີຈຸດປະສົງໃຊ້ແມ່ພິມຊນິດ ມະນີເດຊ[Manideth.ttf] ເພື່ອຂຽນຫນ້າເວັບໄຊຕ໌ຕ່າງໆ ຂອງທ່ານ ທ່ານຄວນຕື່ມໃສ່ແບບນີ້ ຄື <span style="font-family: MANIDETH, Saysettha OT, Phetsarath OT;"> ເພື່ອໃຫ້ Protocole HTML ສາມາດອ່ານແມ່ພິມ MANIDETH ກ່ອນຫມູ່ ຖ້າວ່າແມ່ພິມ MANIDETH ບໍ່ມີຢູ່ໃນຣະບົບຄອມພິວເຕີຂອງທ່ານ ມັນຈະໄປຊອກຫາແມ່ພິມຊນິດຕໍ່ໄປ ດັ່ງ Saysethha OT ແລະຖ້າວ່າແມ່ພິມຊນິດນີ້ບໍ່ມີ ມັນຈະໄປຊອກຫາແມ່ພິມຊນິດຕໍ່ໄປ ຄື  Phetsarath OT

---

໒ ເກີ ນ. ເກີເປັນຄຳມູນ ຊຶ່ງຄຳມູນແມ່ນຄຳລາວແທ້ໆທີ່ມີແຕ່ພຍາງດຽວເທົ່ານັ້ນ ແລະ ແປວ່າ ທຸງ

ເວັບໄຊຕ໌ http://laocom.free.fr ຂຽນແບບນີ້ ເພື່ອໃຫ້ຜູ່ທີ່ບໍ່ມີແມ່ພິມບາງຊນິດ ສາມາດອ່ານເວັບໄຊຕ໌ໃຍນີ້ໄດ້

ທ່ານສາມາດໄປສາກເອົາໂປຣແກຣມ Oramany 2005 ລົງມາໄວ້ຂຽນຫນັງສືລາວຢູນິກົດ[Unicode] ທຸກຊນິດ ໄດ້ທີ່ http://laocom.free.fr ໃນຫົວຂໍ້ « ຫນັງສືລາວ ຢູນິກົດ » ຫລັງຈາກຫົວຂໍ້ « ສື່ມະຕິກ » ກ້ຳຊ້າຍ (ສີຂຽວ)

ມະນິເດຊ ເປັນແມ່ພິມທີ່ຂ້າພະເຈົ້າໄດ້ໃຊ້ເວລາແຕ້ມເດືອນເຄິ່ງ ຈິ່ງສຳເຣັດ ມື້ລະແປດຊົ່ວໂມງເຕັມ ແລະ ຍັງຈະໄດ້ ດັດແປງອັກສອນລາຕິນໃຫມ່ ພ້ອມທັງຈະເສີມເຄື່ອງຫມາຍທີ່ເຮົາມັກໃຊ້ກັນຢູ່ເລື້ອຍໆ ເພື່ອເປັນການຟື້ນຟູພາສາ ລາວ ແລະ ການສົ່ງເສີມນັກຂຽນຫນັງສືລາວທັງຫລາຍ ຂ້າພະເຈົ້າຈິ່ງໄດ້ຕັດສິນໃຈ ເອົາແມ່ພິມຂອງຂ້າພະເຈົ້າຊນິດນີ້ ອອກມາໃສ່ໃນເວັບໄຊຕ໌ (ບໍ່ແມ່ນແມ່ພິມທີ່ໃຊ້ຂຽນຫນັງສືນີ້ ແລະ ມະນິເດຊແມ່ນອັກສອນທີ່ຂຽນໃສ່ໃນລຳສີຟ້ານັ້ນ)

ໃນຂັ້ນຕໍ່ໄປ ຂ້າພະເຈົ້າຈະເອົາແມ່ພິມຂອງຂ້າພະເຈົ້າທຸກໆຊນິດ ອອກມາໃສ່ໃນເວັບໄຊຕ໌ ແຕ່ບໍ່ໄດ້ຫມາຍຄວາມວ່າ ແມ່ພິມຂອງຂ້າພະເຈົ້າຄັກກວ່າຂອງຜູ່ອື່ນ ກົງກັນຂ້າມ ບາງທ່ານອາດຈະບໍ່ມັກມັນຈ້ຳ[໓]

ແດ່ທ່ານທຸກຄົນທີ່ພຍາຍາມຂຽນເປັນພາສາລາວແລະໃຊ້ພາສາລາວໃຫ້ເປັນປໂຍດ

ຄຳແພວ ພູເພັຊຣ໌ລິນທອງ
Khamphéo Phouphetlinthong

ເມື່ອວັນທີ ໐໗-໐໕-໒໐໐໗ ເດືອນ ພຶສພາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ທີ່ປະເທດຝຣັ່ງ[໔]

ແມ່ພິມ ເສດຖາ

໐໑໒໓໔໕໖໗໘໙

ກຂຄງຈສຊຍດ

ຕຖທນບປຜຝພ

ຟມຢຣລວຫອຮ

ສຳຄັນ

໑໙໗໕

໑໙໗໗

໒໐໐໕

---

໓ ແມ່ພິມ. ກິຈການການພິມ (ລິຂກົມ) ໃນສໄມກ່ອນ ເພິ່ນຫລໍ່ຕົວອັກສອນແຕ່ລະຕົວ ຖ້າຈະເວົ້າໃຫ້ຖືກແທ້ແມ່ນ ແຕ່ລະລູກ ແລະ ລູກອັກສອນພ້ອມດ້ວຍເຄື່ອງຫມາຍທັງເຫມິດນັ້ນ (ແຕ່ລະສຳລັບ ຊຶ່ງຄົນລາວສໄມໃຫມ່ຮ້ອງວ່າຊຸດນຶ່ງ) ເພິ່ນຮ້ອງວ່າແມ່ພິມ ຍ້ອນວ່າ ລູກອັກສອນແຕ່ລະສຳລັບຈະແຕກຕ່າງກັນສເມີ ແລະ ໃຊ້ເປັນແບບຢ່າງໃນການອອກແບບ « ລິຂກົມ » (Edition)(?) ດ້ວຍເຫດນີ້ ພວກອາຈີບໂຮງພິມຝຣັ່ງຈິ່ງພາກັນຮ້ອງຄຳນີ້ວ່າ Fonte (ຫລໍ່)

໔ ຂນາດຂອງບັນດາອັກສອນໃນຫນັງສືນີ້ແມ່ນ ໑໒ ສຳລັບຂໍ້ບັນທຶກນັ້ນແມ່ນ ໑໐ ສຳລັບໃຊ້ຂຽນຫົວຂໍ້ແມ່ນ ໑໖ ແລະແມ່ພິມຊນິດນີ້ຊື່ວ່າ ເສດຖາ ອັນມີຄັນແຖວຂນາດດຽວກັນກັບຄັນແຖວຂອງແມ່ພິມ Arial (Interligne) (ແລະ ຖືກສ້າງຂຶ້ນມາສຳລັບໃຊ້ຂຽນກາຕຸ່ນລາວ) ຕົວເລກລາວ ໑໐ ເລກ ຂ້າພະເຈົ້າໄດ້ແຕ້ມຂຶ້ນເທິງແຖວລອຍຫມົດທຸກຕົວ ຄື ໐ ໑ ໒ ໓ ໔ ໕ ໖ ໗ ໘ ໙ ເວັ້ນ ໑໙໗໕ ໑໙໗໗ ໒໐໐໕